ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ 122 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 18 JUN 2021

# ແຈ້ງການ

**ເຖິງ:** ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດແລກປ່ຽນເງິນຕາ;

**ເລື່ອງ:** ໂຈະການຮັບເອກະສານຄຳຮ້ອງ ແລະ ການອອກໜັງສືອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນຂອບເຂດທົ່ວປະເທດ.

– ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ), ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບທົ່ວເຖິງກັນວ່າ: **ທຫລ ຈະໄດ້ໂຈະການຮັບເອກະສານຄຳຮ້ອງ ແລະ ການພິຈາລະນາອອກໜັງສືອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນຂອບເຂດທົ່ວປະເທດ ນັບແຕ່ວັນລົງລາຍເຊັນໃນແຈ້ງການສະບັບນີ້ເປັນຕົ້ນໄປ** ເພື່ອທົບທວນ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນໄລຍະຜ່ານມາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຢາກຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ໃນຕໍ່ໜ້າ ເພື່ອຊາບ.

**ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ